ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----=== 000 ===-----

ຄະນະກຳມະການຄຸ້ມຄອງຫຼັກຊັບ — ເລກທີ 0008/ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 01 APR 2016

# ລະບຽບ
# ວ່າດ້ວຍຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ (ສະບັບປັບປຸງ)

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013;
- ອີງຕາມໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0114/ສຄຄຊ ລົງວັນທີ 21 ມີນາ 2016.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ສູດການຄິດໄລ່ ກ່ຽວກັບການຮັກສາອັດຕາສ່ວນຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ ເພື່ອເປັນການປ້ອງກັນ ແລະ ບໍລິຫານຄວາມສ່ຽງທາງດ້ານການເງິນ ແນ່ໃສ່ຮັບປະກັນຄວາມໝັ້ນຄົງ ໃນການເຄື່ອນໄຫວທຸລະກິດ ຂອງບໍລິສັດຫຼັກຊັບ.

**ມາດຕາ 2 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນລະບຽບສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ອັດຕາສ່ວນຄວາມພຽງພໍຂອງທຶນ** (Net Capital Ratio) ໝາຍເຖິງ ອັດຕາສ່ວນທີ່ສະແດງເຖິງລະດັບຄວາມສາມາດໃນການຊຳລະໜີ້ສິນໄລຍະສັ້ນ ທີ່ເກີດຈາກການເຄື່ອນໄຫວທຸລະກິດ ຂອງບໍລິສັດຫຼັກຊັບ;
2. **ຊັບສິນທັງໝົດ** ໝາຍເຖິງ ຜົນລວມທັງໝົດຂອງຊັບສິນຂອງບໍລິສັດຫຼັກຊັບ ທີ່ສະແດງອອກໃນໃບສະຫຼຸບຊັບສົມບັດ ເບື້ອງຊັບສິນ ແຕ່ບໍ່ລວມຊັບສິນທີ່ເປັນຂອງຜູ້ລົງທຶນ;

3. **ມູນຄ່າຄວາມສ່ຽງຂອງຊັບສິນໝູນວຽນ** ໝາຍເຖິງ ຜົນລວມ ຂອງແຕ່ລະລາຍການຂອງຊັບສິນໝູນວຽນ ຕາມມູນຄ່າຕົວຈິງໃນບັນຊີ ຄູນໃຫ້ ນ້ຳໜັກຄວາມສ່ຽງຂອງຊັບສິນໝູນວຽນແຕ່ລະປະເພດ;
4. **ຊັບສິນໄລຍະຍາວ** ໝາຍເຖິງ ຊັບສິນ ທີ່ບໍ່ສາມາດແລກປ່ຽນ ເປັນເງິນ ພາຍໃນໜຶ່ງປີ ປະກອບມີ: ຊັບສິນບັດຄົງທີ່, ເງິນລົງທຶນໄລຍະຍາວ, ໜີ້ຕ້ອງຮັບໄລຍະຍາວ ແລະ ຊັບສິນອື່ນໆ ທີ່ບໍ່ສາມາດແລກປ່ຽນຊື້-ຂາຍ ພາຍໃນໜຶ່ງປີ;
5. **ໜີ້ສິນທັງໝົດ** ໝາຍເຖິງ ຜົນລວມທັງໝົດຂອງໜີ້ສິນຂອງບໍລິສັດຫຼັກຊັບ ທີ່ສະແດງອອກໃນໃບສະຫຼຸບຊັບສິນບັດເບື້ອງໜີ້ສິນ ແຕ່ບໍ່ລວມໜີ້ຕ້ອງສົ່ງຂອງຜູ້ລົງທຶນ;
6. **ໜີ້ສິນໄລຍະຍາວ** ໝາຍເຖິງ ເງິນກູ້ຢືມໄລຍະຍາວ, ໜີ້ຕ້ອງສົ່ງໄລຍະຍາວ ລະຫວ່າງບໍລິສັດໃນກຸ່ມ ແລະ ໜີ້ຕ້ອງສົ່ງໄລຍະຍາວອື່ນໆ;
7. **ໜີ້ສິນໄລຍະສັ້ນນອກໃບສະຫຼຸບຊັບສິນບັດ** ໝາຍເຖິງ ລາຍການທີ່ມີຜົນກະທົບຕໍ່ໜີ້ສິນຂອງບໍລິສັດຫຼັກຊັບ ທີ່ມີອະນຸການຊຳລະ ພາຍໃນໜຶ່ງປີ ແຕ່ບໍລິສັດຫຼັກຊັບ ບໍ່ໄດ້ເອົາເຂົ້າມາລວມໃນໃບສະຫຼຸບຊັບສິນບັດ.

**ມາດຕາ 3 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ສຳລັບ ບໍລິສັດຫຼັກຊັບ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ຕາມການກຳນົດຂອງລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ ຍົກເວັ້ນ ບໍລິສັດຫຼັກຊັບທີ່ເຄື່ອນໄຫວສະເພາະເປັນທີ່ປຶກສາທາງດ້ານການເງິນ.

## ໝວດທີ 2
## ອັດຕາສ່ວນຄວາມພຽງພໍຂອງທຶນ

**ມາດຕາ 4 ລະດັບອັດຕາສ່ວນຄວາມພຽງພໍຂອງທຶນ**

ບໍລິສັດຫຼັກຊັບ ຕ້ອງຮັກສາອັດຕາສ່ວນຄວາມພຽງພໍຂອງທຶນ ໃຫ້ຢູ່ໃນລະດັບ ໃຫຍ່ກວ່າ ຫຼື ເທົ່າກັບ ສິບສອງສ່ວນຮ້ອຍ.

**ມາດຕາ 5 ການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ**

ອັດຕາສ່ວນຄວາມພຽງພໍຂອງທຶນ ແມ່ນອັດຕາສ່ວນທີ່ໄດ້ຈາກຜົນການຄິດໄລ່ ຕາມສູດຄິດໄລ່ດັ່ງນີ້:

$$\text{ອັດຕາສ່ວນຄວາມພຽງພໍຂອງທຶນ} = \frac{\text{ຊັບສິນທັງໝົດ} - \text{ຊັບສິນໄລຍະຍາວ} - \text{ມູນຄ່າຄວາມສ່ຽງຂອງຊັບສິນໝູນວຽນ} - \text{ໜີ້ສິນທັງໝົດ}}{\text{ໜີ້ສິນທັງໝົດ} - \text{ໜີ້ສິນໄລຍະຍາວ} + \text{ໜີ້ສິນໄລຍະສັ້ນນອກໃບສະຫຼຸບຊັບສິນບັດ}} \times 100$$

ຜົນການຄິດໄລ່ ສະແດງໃຫ້ເຫັນເຖິງລະດັບຄວາມສາມາດ ໃນການຊຳລະໜີ້ໄລຍະສັ້ນ ຂອງບໍລິສັດຫຼັກຊັບ.

ສໍາລັບລາຍລະອຽດກ່ຽວກັບ ການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ໃຫ້ປະຕິບັດຕາມຄໍາແນະນໍາສະເພາະຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ກໍານົດອອກໃນແຕ່ລະໄລຍະ.

**ມາດຕາ 6 ພັນທະຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ມີພັນທະ ດັ່ງນີ້:

1. ຄິດໄລ່ ແລະ ລາຍງານອັດຕາສ່ວນຄວາມພຽງພໍຂອງທຶນຂອງຕົນ ໃຫ້ຖືກຕ້ອງ ແລະ ທັນຕາມກໍານົດເວລາ ຕາມທີ່ໄດ້ກໍານົດໄວ້ໃນລະບຽບສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
2. ແຕ່ງຕັ້ງຜູ້ຮັບຜິດຊອບໃນການຄິດໄລ່ ແລະ ລາຍງານ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ແລະ ສົ່ງລາຍຊື່ຜູ້ຖືກແຕ່ງຕັ້ງໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ.

**ມາດຕາ 7 ການລາຍງານ**

ບໍລິສັດຫຼັກຊັບ ຕ້ອງລາຍງານອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. **ການລາຍງານແບບປົກກະຕິ.**
   - 1.1. ອັດຕາສ່ວນຄວາມພຽງພໍຂອງທຶນ ຂອງແຕ່ລະວັນລັດຖະການ ໃຫ້ລາຍງານຜ່ານທາງເອເລັກໂຕຣນິກ ພາຍໃນວັນລັດຖະການຖັດໄປ ຕາມແບບຟອມລາຍງານທີ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ກໍານົດ;
   - 1.2. ອັດຕາສ່ວນຄວາມພຽງພໍຂອງທຶນ ຂອງວັນລັດຖະການສຸດທ້າຍຂອງເດືອນ ໃຫ້ລາຍງານຜ່ານທາງເອກະສານ ພາຍໃນກໍານົດເວລາ ສິບຫ້າວັນຂອງເດືອນຖັດໄປ ຕາມແບບຟອມລາຍງານທີ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ກໍານົດ.

2. **ການລາຍງານແບບກະທັນຫັນ**
   - 2.1. ອັດຕາສ່ວນຄວາມພຽງພໍຂອງທຶນ ຫຼຸດລົງຕໍ່າກວ່າຊາວສ່ວນຮ້ອຍ ຕ້ອງລາຍງານຜ່ານທາງເອກະສານ ພາຍໃນກໍານົດເວລາ ສອງວັນລັດຖະການຖັດໄປ ພ້ອມດ້ວຍສາເຫດທີ່ເຮັດໃຫ້ອັດຕາສ່ວນດັ່ງກ່າວຫຼຸດລົງ ແລະ ສືບຕໍ່ລາຍງານເປັນແຕ່ລະວັນ ຈົນກວ່າຈະສາມາດແກ້ໄຂໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະດັບຊາວສ່ວນຮ້ອຍຂຶ້ນໄປ ເປັນເວລາຢ່າງໜ້ອຍ ຫ້າວັນລັດຖະການ ຕໍ່ເນື່ອງ;
   - 2.2. ອັດຕາສ່ວນຄວາມພຽງພໍຂອງທຶນ ຫຼຸດລົງຕໍ່າກວ່າ ສິບສອງສ່ວນຮ້ອຍ ຕ້ອງລາຍງານຜ່ານທາງເອກະສານ ພາຍໃນກໍານົດເວລາ ວັນລັດຖະການຖັດໄປ ພ້ອມດ້ວຍສາເຫດທີ່ເຮັດໃຫ້ອັດຕາສ່ວນດັ່ງກ່າວຫຼຸດລົງ ແລະ ສືບຕໍ່ລາຍງານເປັນແຕ່ລະວັນ ຈົນກວ່າຈະສາມາດແກ້ໄຂ ໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະດັບຊາວສ່ວນຮ້ອຍຂຶ້ນໄປ ເປັນເວລາຢ່າງໜ້ອຍຫ້າວັນລັດຖະການ ຕໍ່ເນື່ອງ;
   - 2.3. ແຜນການແກ້ໄຂບັນຫາກ່ຽວກັບ ອັດຕາສ່ວນຄວາມພຽງພໍຂອງທຶນ ພາຍໃນກໍານົດເວລາ ສິບວັນລັດຖະການ ໃນກໍລະນີເກີດເຫດການທີ່ໄດ້ກໍານົດໄວ້ໃນ ຂໍ້ 2.1 ຫຼື 2.2 ຂອງມາດຕານີ້ ພ້ອມທັງປະຕິບັດຕາມແຜນການແກ້ໄຂບັນຫາໃຫ້ສໍາເລັດ ພາຍໃນກໍານົດເວລາ ເກົ້າສິບວັນນັບແຕ່ວັນທີອັດຕາສ່ວນຄວາມພຽງພໍຂອງທຶນຫຼຸດລົງຕໍ່າກວ່າຊາວສ່ວນຮ້ອຍ. ຍົກເວັ້ນກໍລະນີ ສາມາດແກ້ໄຂໃຫ້ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະດັບຊາວສ່ວນຮ້ອຍ ພາຍໃນ

ກໍານົດເວລາ ສິບວັນລັດຖະການ ນັບແຕ່ວັນທີອັດຕາສ່ວນຄວາມພຽງພໍຂອງທຶນຫຼຸດລົງຕໍ່າກ່ວາຊາວສ່ວນຮ້ອຍ.

ກໍລະນີ ມີລາຍການນອກໃບສະຫຼຸບຊັບສິນບັດ ທີ່ໄດ້ເອົາມາຄິດໄລ່ ຫຼື ບໍ່ໄດ້ເອົາມາຄິດໄລ່ ເຂົ້າໃນອັດຕາສ່ວນຄວາມພຽງພໍຂອງທຶນ ບໍລິສັດຫຼັກຊັບ ຕ້ອງສົ່ງບົດລາຍງານ ພ້ອມດ້ວຍເຫດຜົນ ແລະ ສໍາເນົາເອກະສານທີ່ກ່ຽວຂ້ອງກັບລາຍການນອກໃບສະຫຼຸບຊັບສິນບັດ ຢ່າງເປັນລາຍລັກອັກສອນ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 ການເກັບຮັກສາເອກະສານ**

ບໍລິສັດຫຼັກຊັບ ຕ້ອງເກັບຮັກສາເອກະສານ ທີ່ກ່ຽວຂ້ອງກັບການລາຍງານ ແລະ ການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ໄວ້ໃຫ້ຄົບຖ້ວນ ຢ່າງໜ້ອຍ ສິບປີ.

**ມາດຕາ 9 ຂໍ້ຫ້າມ**

ຫ້າມ ບໍລິສັດຫຼັກຊັບ ມີພຶດຕິກໍາໃດໜຶ່ງບໍ່ວ່າ ທາງກົງ ຫຼື ທາງອ້ອມ ດັ່ງນີ້:

1. ລະເວັ້ນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ເປັນແຕ່ລະວັນ;
2. ຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ຖືກຕ້ອງ;
3. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ;
4. ສົ່ງແຜນການແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ;
5. ແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ;
6. ແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ຖືກຕ້ອງຕາມແຜນການ ຫຼື ບໍ່ສອດຄ່ອງກັບລະບຽບການ.

## ໝວດທີ 3
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 10 ນະໂຍບາຍຕໍ່ຜູ້ມີຜົນງານ**

ບໍລິສັດຫຼັກຊັບ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

**ມາດຕາ 11 ມາດຕະການຕໍ່ຜູ້ລະເມີດ**

ບໍລິສັດຫຼັກຊັບ ທີ່ລະເມີດລະບຽບສະບັບນີ້ທີ່ກໍ່ໃຫ້ເກີດຄວາມເສັຍຫາຍແກ່ ລັດ, ສັງຄົມ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ປັບໃໝ ແລະ ມາດຕະການເພີ່ມໂດຍອີງຕາມແຕ່ລະກໍລະນີຂອງການກະທໍາຜິດ ແລະ ລະດັບຂອງການລະເມີດ.

**ມາດຕາ 12 ມາດຕະການສຶກສາອົບຮົມ**

ບໍລິສັດຫຼັກຊັບ ຈະຖືກມາດຕະການ ສຶກສາອົບຮົມ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ອັດຕາສ່ວນຄວາມພຽງພໍຂອງທຶນ ຢູ່ໃນລະຫວ່າງ ສິບສອງ ຫາ ຕໍ່າກວ່າຊາວສ່ວນຮ້ອຍ;

2. ລະເວັ້ນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ເປັນແຕ່ລະວັນ ໜຶ່ງ ຫາ ສອງ ວັນລັດຖະການ;
3. ຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ຖືກຕ້ອງ ໜຶ່ງວັນລັດຖະການ;
4. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ໜຶ່ງ ຫາ ສອງ ວັນລັດຖະການ;
5. ນຳສົ່ງແຜນການແກ້ໄຂບັນຫາ ກ່ຽວກັບອັດຕາສ່ວນຄວາມພຽງພໍຂອງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂໍ້ 2.3 ຂອງລະບຽບສະບັບນີ້ ຊັກຊ້າ ໜຶ່ງ ຫາ ສອງ ວັນລັດຖະການ.

**ມາດຕາ 13 ມາດຕະການປັບໃໝ**

ບໍລິສັດຫຼັກຊັບ ທີ່ລະເມີດ ລະບຽບສະບັບນີ້ ຈະຖືກມາດຕະການປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ລະເວັ້ນການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ເປັນແຕ່ລະວັນ ນັບແຕ່ ສາມວັນລັດຖະການຂຶ້ນໄປ ຈະຖືກປັບໃໝ ສິບລ້ານກີບຕໍ່ວັນ;
2. ຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ບໍ່ຖືກຕ້ອງ ສອງວັນລັດຖະການຂຶ້ນໄປ ຈະຖືກປັບໃໝ ຫ້າລ້ານກີບຕໍ່ວັນ;
3. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ແຕ່ ສາມ ຫາ ຫ້າ ວັນລັດຖະການ ຈະຖືກປັບໃໝ ສາມລ້ານກີບຕໍ່ວັນ;
4. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ແຕ່ ຫົກ ຫາ ສິບ ວັນລັດຖະການ ຈະຖືກປັບໃໝ ຫ້າລ້ານກີບຕໍ່ວັນ;
5. ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ຫຼາຍກວ່າ ສິບວັນລັດຖະການ ຖືວ່າບໍ່ລາຍງານການຄິດໄລ່ອັດຕາສ່ວນຄວາມພຽງພໍຂອງທຶນ ຈະຖືກປັບໃໝ ສິບລ້ານກີບ;
6. ສົ່ງແຜນການແກ້ໄຂບັນຫາ ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ແຕ່ ສາມ ຫາ ຫ້າ ວັນລັດຖະການ ຈະຖືກປັບໃໝ ຫ້າລ້ານກີບຕໍ່ວັນ;
7. ສົ່ງແຜນການແກ້ໄຂບັນຫາ ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ແຕ່ ຫົກ ຫາ ສິບ ວັນລັດຖະການ ຈະຖືກປັບໃໝ ສິບລ້ານກີບຕໍ່ວັນ;
8. ສົ່ງແຜນການແກ້ໄຂບັນຫາ ອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ຫຼາຍກວ່າ ສິບວັນລັດຖະການ ຖືວ່າບໍ່ສົ່ງແຜນການແກ້ໄຂບັນຫາ ຈະຖືກປັບໃໝ ສາມສິບລ້ານກີບ;
9. ແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນ ຊັກຊ້າ ບໍ່ທັນເວລາຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ສິບຫ້າລ້ານກີບຕໍ່ວັນ;
10. ອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່າກວ່າ ສິບສອງສ່ວນຮ້ອຍ ຈະຖືກປັບໃໝ ຫ້າລ້ານກີບຕໍ່ວັນ.

**ມາດຕາ 14 ມາດຕະການເພີ່ມ**

ບໍລິສັດຫຼັກຊັບ ຈະຖືກມາດຕະການເພີ່ມ ຕາມແຕ່ລະກໍລະນີ ດັ່ງນີ້:

1. ອັດຕາສ່ວນຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ ຕໍ່າກວ່າ ຊາວສ່ວນຮ້ອຍ ແມ່ນບໍ່ອະນຸຍາດໃຫ້ຂະຫຍາຍສາຂາ, ໜ່ວຍບໍລິການ ແລະ ຫ້ອງການຜູ້ຕາງໜ້າ;
2. ອັດຕາສ່ວນຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ ຕໍ່າກວ່າ ສິບສອງສ່ວນຮ້ອຍ ເປັນເວລາ ຫົກເດືອນຕິດຕໍ່ກັນ ຫຼື ອັດຕາສ່ວນຄວາມພຽງພໍຂອງທຶນ ຕໍ່າກວ່າ ຫຼື ເທົ່າກັບສູນສ່ວນຮ້ອຍ ຫຼື ບໍ່ສາມາດແກ້ໄຂບັນຫາອັດຕາສ່ວນຄວາມພຽງພໍຂອງທຶນ ຕາມແຜນການແກ້ໄຂ ທີ່ໄດ້ກຳນົດໃສ່ບໍລິສັດຫຼັກຊັບ ຈະຖືກຈຳກັດ ຫຼື ໂຈະການເຄື່ອນໄຫວທຸລະກິດດ້ານຫຼັກຊັບ ບາງສ່ວນ ຫຼື ທັງໝົດ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ລະບຽບສະບັບນີ້ ໃຊ້ປ່ຽນແທນ ລະບຽບວ່າດ້ວຍ ຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ ສະບັບເລກທີ 003/ຄຄຊ, ລົງວັນທີ 18 ກຸມພາ 2014.

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ.

ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ

ດຣ.ບຸນປອນ ບຸດຕະນະວົງ